ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ຄະນະໂຄສະນາອົບຮົມແຂວງ

ເລກທີ.273../ຄອຂ.ຊຍ

ໄຊຍະບູລີ, ວັນທີ..8..ພຶດສະພາ 2024

# ຄຳແນະນຳ

ຮຽນ: ບັນດາສະຫາຍ ເລຂາພັກເມືອງ, ເຈົ້າເມືອງ ແລະ ຄະນະໂຄສະນາອົບຮົມເມືອງ 11 ເມືອງ ໃນທົ່ວແຂວງ.

ເລື່ອງ: ການຈັດຕັ້ງໂຄສະນາ-ປາຖະກະຖາ ວັນປະຫວັດສາດສຳຄັນ ຂອງຊາດ, ຂອງພັກ ແລະ ຂອງສາກົນ ໃນເດືອນ ພຶດສະພາ.

- ອີງຕາມ ແຈ້ງການແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກ 563/ຄອສພ, ລົງວັນທີ 29 ເມສາ 2024 ກ່ຽວກັບການຈັດຕັ້ງໂຄສະນາ-ປາຖະກະຖາວັນປະຫວັດສາດສຳຄັນ ຂອງຊາດ, ຂອງພັກ ແລະ ຂອງສາກົນ ໃນເດືອນ ພຶດສະພາ.

ເພື່ອເຮັດໃຫ້ເປັນເອກະພາບ ໃນການຈັດຕັ້ງໂຄສະນາ-ປາຖະກະຖາ ວັນປະຫວັດສາດສຳຄັນ ຂອງຊາດ, ຂອງພັກ ແລະ ຂອງສາກົນ ມີຄວາມໝາຍສຳຄັນຢ່າງເລິກເຊິ່ງ ແລະ ເປັນຂະບວນກວ້າງຂວາງທົ່ວເຖິງທຸກເປົ້າໝາຍ ຄະນະໂຄສະນາອົບຮົມແຂວງ ຈຶ່ງໄດ້ອອກຄຳແນະນຳ ສະບັບນີ້ມາ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

## I. ຈຸດປະສົງ-ລະດັບຄາດໝາຍ.

1. ເພື່ອເຮັດໃຫ້ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າໃນທົ່ວແຂວງມີຄວາມຮັບຮູ້, ເຂົ້າໃຈ ແລະ ຮ່ຳຮຽນເອົາແບບຢ່າງ ຂອງຜູ້ນຳ, ມີນ້ຳໃຈຮັກຊາດອັນສູງສົ່ງ ແລະ ຄວາມອົງອາດກ້າຫານ, ຄວາມເດັດດ່ຽວໝຽວແໜ້ນ ຂອງນັກຮົບປະຕິວັດໃນຂະບວນການຕໍ່ສູ້ປົດປ່ອຍຊາດ ໃນເມື່ອກ່ອນ.

2. ເພື່ອທົບທວນຫວນຄືນມູນເຊື້ອອົງອາດກ້າຫານ ຂອງກອງທັບ, ຂອງຜູ້ນຳພັກ-ລັດ ໂດຍສະເພາະ ການນຳພາຊີ້ນຳອັນສະຫຼາດຊ່ອງໃສ ຂອງພັກໃນການຜ່າວົງປິດລ້ອມ ຂອງກອງພັນທີ 2 ວິລະຊົນ ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນ ຂອງຜູ້ນຳພັກ.

3. ເພື່ອເສີມຂະຫຍາຍມູນເຊື້ອຄວາມສາມັກຄີ ແລະ ການຮ່ວມສຳພັນສູ້ຮົບຕ້ານຈັກກະພັດລ່າເມືອງຂຶ້ນຝຣັ່ງ ຂອງກອງທັບ ແລະ ປະຊາຊົນ 3 ຊາດ ອິນດູຈີນ ລາວ-ຫວຽດນາມ-ກຳປູເຈຍໃນການຮ່ວມມືໃນໄລຍະໃໝ່ ໃຫ້ຂະຫຍາຍຕົວຍິ່ງຂຶ້ນ.

## II. ດ້ານເນື້ອໃນການໂຄສະນາ-ປາຖະກະຖາ.

### 1. ເນື້ອໃນໂຄສະນາ-ປາຖະກະຖາ.

- ວັນຜ່າວົງປິດລ້ອມ ຂອງກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນຊຽງຂວາງ ( 18 ພຶດສະພາ 1959-18 ພຶດສະພາ 2024) ຄົບຮອບ 65 ປີ.
- ວັນໄຊຊະນະດຽນບຽນຟູ ( 7 ພຶດສະພາ 1954-7 ພຶດສະພາ 2024) ຄົບຮອບ 70 ປີ.



ສະແກນດ້ວຍ CamScanner

- ວິລະກຳໂຕນຄຸກຢ່າງມະຫັດສະຈັນ ຂອງຜູ້ນຳພັກ ແລະ ແນວລາວຮັກຊາດ (24 ພຶດສະພາ 1960-24 ພຶດສະພາ 2024) ຄົບຮອບ 64 ປີ.

- ວັນເກີດປະທານໂຮ່ຈີມິນ (19 ພຶດສະພາ 1890-19 ພຶດສະພາ 2024) ຄົບຮອບ 134 ປີ

+ ການຈັດຕັ້ງໂຄສະນາ-ປາຖະກະຖາ ແມ່ນໃຫ້ນຳໃຊ້ເອກະສານທີ່ຄະນະໂຄສະນາອົບຮົມແຂວງ ໄດ້ຈັດສົ່ງມາໃຫ້.

**2. ຄຳຂວັນໂຄສະນາປຸກລະດົມຂະບວນການ.**

- ຕັ້ງໜ້າຮ່ຳຮຽນ ມູນເຊື້ອອັນສະຫງ່າງາມ ແລະ ຄວາມພິລະອາດຫານ ຂອງກອງພົນທີ 2 ວິລະຊົນ.

- ຊົມເຊີຍໄຊຊະນະດຽນບຽນຟູ ຄົບຮອບ 70 ປີ ຢ່າງສຸດໃຈ.

- ລະນຶກວັນໂຕນຄຸກຢ່າງມະຫັດສະຈັນ ຂອງບັນດາຜູ້ນຳພັກ ແລະ ແນວລາວຮັກຊາດຄົບຮອບ 64 ປີ.

- ຮ່ຳຮຽນເອົາຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດ ຂອງປະທານ ໂຮ່ຈີ່ມິນ.

**( ສຳລັບຄຳຂວັນ ແມ່ນພື້ນສີຟ້າ ໂຕໜັງສືສີຂາວ )**

**III. ເປົ້າໝາຍເຂົ້າຮ່ວມ ແລະ ກຳນົດເວລາ.**

- **ເປົ້າໝາຍເຂົ້າຮ່ວມ:** ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ສະມາຊິກພັກ, ພະນັກງານ ແລະ ປະຊາຊົນບັນດາເຜົ່າ.

- **ການຈັດຕັ້ງໂຄສະນາ-ປາຖະກະຖາ** ພາຍຫຼັງໄດ້ຮັບເອກະສານ ຈາກຄະນະໂຄສະນາອົບຮົມແຂວງແລ້ວ ອາດຈະດຳເນີນກ່ອນ ຫຼື ຫຼັງ ວັນດັ່ງກ່າວກໍ່ໄດ້ ແຕ່ບໍ່ໃຫ້ກາຍເດືອນ ພຶດສະພາ ແລະ ໃຫ້ດຳເນີນຕາມເງື່ອນໄຂຕົວຈິງຂອງທ້ອງຖິ່ນ.

**IV. ດ້ານງົບປະມານ.**

- ໃຫ້ນຳໃຊ້ງົບປະມານ ຂອງເມືອງ ໃນການດຳເນີນຈັດຕັ້ງໂຄສະນາ-ປາຖະກະຖາ.

**V. ວິທີຈັດຕັ້ງປະຕິບັດ.**

1. ພາຍຫຼັງໄດ້ຮັບຄຳແນະນຳສະບັບນີ້ແລ້ວ ໃຫ້ຄະນະພັກແຕ່ລະຂັ້ນຄົ້ນຄວ້າປຶກສາຫາລື ແລະ ວາງແຜນເພື່ອຜັນຂະຫຍາຍເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

2. ການຈັດຕັ້ງໂຄສະນາ-ປາຖະກະຖາ ອາດໃຊ້ເວລາໜຶ່ງຕອນ ຫຼື ສອງຕອນ ຕາມເງື່ອນໄຂສະດວກຂອງທ້ອງຖິ່ນ.

3. ພາຍຫຼັງດຳເນີນການຈັດຕັ້ງໂຄສະນາ-ປາຖະກະຖາ ສຳເລັດແລ້ວ ສະຫຼຸບລາຍງານໃຫ້ຄະນະໂຄສະນາອົບຮົມແຂວງ ເພື່ອຈະໄດ້ລາຍງານໃຫ້ຂັ້ນເທິງຮັບຊາບຢ່າງທັນການ.

**ຫົວໜ້າຄະນະໂຄສະນາອົບຮົມແຂວງ**

ອາເນ ຊົງເຢັ່ງເສັ້ງ



ສະແກນດ້ວຍ CamScanner